ກະຊວງອຸດສາຫະກຳ ແລະ ການຄ້າ
ສະຖາບັນ ອຸດສາຫະກຳ ແລະ ການຄ້າ

# ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍ

## ການສຶກສາບົດບາດຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດ (Lao National Single Window) ທີ່ມີຕໍ່ພາກທຸລະກິດຂອງ ສປປ ລາວ

### ບົດສະຫຼຸບຫຍໍ້

ລະບົບແຈ້ງພາສີປະຕູດຽວແຫ່ງຊາດແມ່ນເຄື່ອງມືທີ່ໃຊ້ສຳລັບການແຈ້ງເອກະສານໃຫ້ບັນດາຫົວໜ່ວຍທາງພາກລັດ ແລະ ພາກທຸລະກິດທີ່ມີການນຳເຂົ້າ, ສົ່ງອອກ, ແລະ ການນຳເຂົ້າສິນຄ້າຜ່ານແດນເພື່ອໃນການແລກປ່ຽນຂໍ້ມູນຂ່າວສານ. ສຳລັບ ສປປ ລາວ ແມ່ນຍັງຢູ່ໃນການລິເລີ່ມໃນການພັດທະນາລະບົບດັ່ງກ່າວເຊິ່ງປະກອບດ້ວຍການພັດທະນານະໂຍບາຍ ແລະ ລະບຽບການທີ່ແທດເໝາະເພື່ອອຳນວຍຄວາມສະດວກໃຫ້ແກ່ພາກລັດ ແລະ ພາກທຸລະກິດຢ່າງມີປະສິດທິພາບ. ເພື່ອສ້າງຄວາມເຂົ້າໃຈເຖິງບັນຫາຂອງປະສິດທິພາບການໃຫ້ບໍລິການໃນໄລຍະການດຳເນີນການຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດ ແລະ ກົນໄກ ອື່ນໆທີ່ຕິດພັນກັບລະບົບ ແລະ ປະກອບຂໍ້ສະເໜີແນະທາງດ້ານນະໂຍບາຍເພື່ອຍົກລະດັບປະສິດທິພາບຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດ. ໃນການສຶກສາຄັ້ງນີ້ໄດ້ມີການລົງເກັບກຳຂໍ້ມູນຕົວຈິງນຳໃຊ້ການສຳພາດແບບເປີດກັບຜູ້ຊົມໃຊ້ທັງໝົດ 18 ບໍລິສັດທີ່ເຮັດທຸລະກິດຮູບແບບແຕກຕ່າງກັນ.

ຈາກຜູ້ຊົມໃຊ້ຕົວຈິງວ່າລະບົບນີ້ສາມາດອຳນວຍຄວາມສະດວກໃນການແຈ້ງສິນຄ້າ, ຍົກລະດັບຄວາມໝັ້ນໃຈໃນການນຳສົ່ງເອກະສານ ແລະ ຕິດຕາມກວດກາ, ສ້າງເງື່ອນໄຂທີ່ສະດວກໃນການບໍລິການ, ແລະ ຮັບປະກັນການເກັບພັນທະເຂົ້າພາກລັດຢ່າງ ມີລະບົບ. ເຖິງຢ່າງໃດກໍຕາມພາກທຸລະກິດ ຍັງຂາດຄວາມເຂົ້າໃຈກ່ຽວກັບລະບົບ ແລະ ກົນໄກຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດໃນການເຊື່ອມຕໍ່ກັບພາກສ່ວນທີ່ກ່ຽວຂ້ອງ. ອີງໃສບົດຮຽນຈາກພາກປະຕິບັດໄດ້ມີການສະເໜີແນະທາງນະໂຍບາຍທີ່ຕິດພັນກັບຫຼາຍກິດຈະກຳໃນແຕ່ລະໄລຍະເປັນຕົ້ນແມ່ນການຝຶກອົບຮົມບຸກຄະລາກອນທັງພາກລັດ ແລະ ເອກະຊົນ, ຮູບການອຳນວຍຄວາມສະດວກ, ການປັບປຸງໃຫ້ລະບົບມີການເຊື່ອມໂຍງໃຫ້ດີຂຶ້ນ, ແລະ ການແລກປ່ຽນບົດຮຽນກັບສາກົນ.

ສະໜັບສະໜູນການເກັບກຳຂໍ້ມູນໂດຍ

MEKONG INSTITUTE

ທ່ານສາມາດ ດາວໂຫຼດເອກະສານຕາມ QR Code ຫຼື Link:

shorturl.at/jrtv8

SCAN ME

# ການສຶກສາບົດບາດຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດ (Lao National Single Window) ທີ່ມີຕໍ່ພາກທຸລະກິດຂອງ ສປປ ລາວ

## ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍ

## ກັນຍາ, 2022


ໂດຍ: ຄູນຄຳ ອິນທະສານ[1], ປອ ສົມເດດ ໂພທິສານ[1], ສິນທະວັນ ຈັນທະວົງ[2], ອາລິຊາ ອິນທະບົວລີ[3], ສຸພາວະດີ ພັນພະຈິດ[4]

ກວດແກ້ໂດຍ: ພະແນກຄົ້ນຄ້ວານະໂຍບາຍການຄ້າ, ສະຖາບັນ ອຸດສາຫະກຳ ແລະ ການຄ້າ

kiameriit@gmail.com


### ພາກສະເໜີ

ASEAN Single Window (ASW) ຫຼື ລະບົບປະຕູດຽວຂອງບັນດາ ປະເທດສະມາຊິກອາຊຽນທີ່ຖືກພັດທະນາເພື່ອປະກອບສ່ວນເຂົ້າ ໃນການສົ່ງເສີມເສດຖະກິດຜ່ານທາງການອຳນວຍຄວາມສະດວກໃນການແລກປ່ຽນຂໍ້ມູນດ້ານເອກະສານການຄ້າຜ່ານແດນລະຫວ່າງປະເທດ. ອາຊຽນແມ່ນພາກພື້ນທຳອິດໃນໂລກທີ່ເລີ່ມສ້າງຕັ້ງລະບົບປະຕູດຽວລະດັບພາກພື້ນ, ລະບົບນີ້ໄດ້ອຳນວຍຄວາມສະດວກໃຫ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດຂອງບັນດາປະເທດສະມາຊິກເປັນລະບົບດຽວກັນສາມາດສົ່ງຂໍ້ມູນຄັ້ງດຽວທີ່ສາມາດເຂົ້າເຖິງນຳກັນໄດ້. ໃນທ້າຍປີ 2019, ບັນດາປະເທດສະມາຊິກອາຊຽນໄດ້ເຂົ້າຮ່ວມລະບົບ ASW Live Operation (ລະບົບປະຕູດຽວອາຊຽນແບບອອນລາຍ) ເຊິ່ງໄດ້ພາໃຫ້ສິດທິພິເສດ ດ້ານອັດຕາພາສີຜ່ານທາງລະບົບ e-CO ໃນຂອບສັນຍາ ASEAN Trade in Goods Agreement (ATIGA) ຫຼື e Form D (LNSW, 2021).

ໃນປີ 2013 ກະຊວງການເງິນໄດ້ຮັບຮອງເອົາສັນຍາຮ່ວມຂອງການສ້າງຕັ້ງລະບົບແຈ້ງພາສີປະຕູດຽວແຫ່ງຊາດ ແລະ ດຳເນີນລະບົບດັ່ງກ່າວເຂົ້າໃນກິດຈະກຳການຄ້າຂ້າມຊາຍແດນ. ໃນຮູບການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ. ດັ່ງນັ້ນລະບົບແຈ້ງພາສີປະຕູດຽວແຫ່ງຊາດຂອງ ສປປ ລາວ ຫຼື Lao National Single Window (LNSW) ຈຶ່ງຖືກສ້າງຂຶ້ນໂດຍແມ່ນການຮ່ວມທຶນລະຫວ່າງກະຊວງການເງິນ ແຫ່ງ ສປປ ລາວ ແລະ ບໍລິສັດ ບີແອກ (ລາວ) ຈຳກັດ ໂດຍໄດ້ຮັບຜິດຊອບການດຳເນີນການປະຕິບັດລະບົບແຈ້ງພາສີປະຕູດຽວແຫ່ງຊາດໃນການດຳເນີນວຽກງານການນຳເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານຢູ່ໃນ ສປປ ລາວ. ໂດຍເປົ້າໝາຍໃນການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດແມ່ນເພື່ອໃຫ້ເປັນກົນໄກອຳນວຍຄວາມສະດວກໃນການແຈ້ງເອກະສານແບບເອເລັກໂຕຣນິກ ເຊິ່ງເຮັດໃຫ້ຂະແໜງການພາກລັດ ແລະ ພາກສ່ວນທຸລະກິດທີ່ກ່ຽວຂອງກັບການນຳເຂົ້າ, ສົ່ງອອກ ແລະ ການສົ່ງສິນຄ້າຜ່ານແດນ ສາມາດແລກປ່ຽນຂໍ້ມູນ ແລະ ເອກະສານຜ່ານປະຕູດຽວເພື່ອດຳເນີນການຂໍອະນຸຍາດ ແລະ ອອກອະນຸຍາດຕາມລະບຽບກົດໝາຍຂອງແຕ່ລະຂະແໜງການກ່ຽວຂ້ອງ (MOF, 2015).

ລະບົບນີ້ໄດ້ເຮັດໃຫ້ຂັ້ນຕອນຕ່າງໆ ໃນການຈັດສົ່ງ ແລະ ປະກອບເອກະສານ ສາມາດເຮັດໄດ້ໂດຍການນຳໃຊ້ລະບົບຄອມພິວເຕີ, ມີຄວາມສະດວກ, ປອດໄພ ໃຫ້ແກ່ທັງພາກລັດ ແລະ ຜູ້ປະກອບການ. ໃນທາງປະຕິບັດ ຄວາມຄາດຫວັງໃນການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ປະກອບດ້ວຍ (LNSW, 2021):

1. ປັບປຸງປະສິດທິຜົນຂອງຂັ້ນຕອນການສະໜອງສິນຄ້າທີ່ມາຮອດທ່າເຮືອ;
2. ຫຼຸດຜ່ອນຄວາມສ່ຽງ ແລະ ເວລາໃນການດຳເນີນການອະນຸມັດເອກະສານຕ່າງໆທີ່ກ່ຽວຂ້ອງ;


[1] ສະຖາບັນ ອຸດສາຫະກຳ ແລະ ການຄ້າ, [2] ກົມນະໂຍບາຍການຄ້າຕ່າງປະເທດ, [3] ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເສດຖະກິດພິເສດ, [4] ບໍລິສັດສະຫວັນປາຊີຟິກກ້າດີເວີລົບເມັ້ນຈຳກັດ

3. ເພີ່ມຄວາມປອດໃສໃນການດຳເນີນທຸລະກິດທີ່ມີການພົວພັນກັບລັດຖະບານ;
4. ເຮັດໃຫ້ການດຳເນີນຂັ້ນຕອນຕ່າງໆທີ່ກ່ຽວຂ້ອງມີຄວາມງ່າຍດາຍ. ຄວາມຄ່ອງຕົວໃນການຂົນສົ່ງ ແລະ ເຄື່ອນຍ້າຍສິນຄ້າເພີ່ມຂຶ້ນ ແລະ ການປ່ອຍສິນຄ້າງ່າຍດາຍຂຶ້ນ;
5. ຫຼຸດຜ່ອນຄ່າໃຊ້ຈ່າຍຕ່າງໆ;
6. ສ້າງເງື່ອນໄຂທີ່ອຳນວຍຄວາມສະດວກເພື່ອໃຫ້ເກີດການແຂ່ງຂັນທີ່ເນື່ອງມາຈາກການດຳເນີນກິດຈະກຳຕ່າງໆທາງທຸລະກິດໃຫ້ທັນເວລາກວ່າເກົ່າ;
7. ເພີ່ມການແຂ່ງຂັນໃນການສະໜອງສິນຄ້າພາຍໃນທີ່ກ່ຽວກັບວຽກງານ (ການຄ້າ ແລະ ການລົງທຶນລະຫວ່າງປະເທດ) ການຄ້າຂ້າມຊາຍແດນ;
8. ສ້າງຄວາມກະຈ່າງແຈ້ງໃຫ້ແກ່ເຈົ້າໜ້າທີ່ຜູ້ກກ່ຽວຂ້ອງເພື່ອການສ້າງ: ສະຖິຕິ ແລະ ບົດລາຍງານ.

ການຫັນເປັນດິຈິຕອນ ຖືວ່າເປັນໜຶ່ງໃນແຮງຂັບເຄື່ອນຫຼັກຂອງເສດຖະກິດໃນຍຸກໃໝ່ ໂດຍສະເພາະແມ່ນໃນຊ່ວງການແຜ່ລະບາດຂອງພະຍາດ Covid-19 ທີ່ໄດ້ຈຳກັດບາງອົງປະກອບທີ່ສຳຄັນຂອງການດຳເນີນທຸລະກຳທາງການຄ້າເຊັ່ນ: ການພົບພໍ້ກັນ, ປະຊຸມ ແລະ ຍື່ນເອກະສານທາງການ. ກ່ຽວກັບບັນຫານີ້ ເຕັກໂນໂລຊີໄດ້ສະໜອງທາງອອກທົດແທນ (ການຄ້າທາງເອເລັກໂຕຣນິກ, ທຸລະກິດແບບເອເລັກໂຕຣນິກ ຫຼື ການຄ້າຂາຍຮູບແບບອອນລາຍ, ການປະຊຸມແບບອອນລາຍ, ການຍື່ນ ເອກະສານແບບເອເລັກໂຕຣນິກ ແລະ ອື່ນໆ) ໃຫ້ແກ່ສັງຄົມເພື່ອເຮັດທຸລະກຳການຄ້າໄດ້ໂດຍບໍ່ເກີດຄວາມຂັດຂ້ອງ.

<u>ການທົບທວນຜົນການສຶກສາ</u>

ບັນດາທິດສະດີ ແລະ ການຄົ້ນຄ້ວາທີ່ຜ່ານມາເຫັນວ່າລະບົບການຄ້າແບບບໍ່ນຳໃຊ້ເຈ້ຍ ມີສ່ວນຊ່ວຍໃນການຫຼຸດຜ່ອນຕົ້ນທຶນ ແລະ ເວລາຂອງຜູ້ປະກອບການໃນການດຳເນີນການຂັ້ນຕອນທາງພາສີ ແລະ ອື່ນໆທີ່ກ່ຽວຂ້ອງສຳລັບການນຳເຂົ້າ ແລະ ສົ່ງອອກ ເພາະສິນຄ້າສາມາດເຄື່ອນຍ້າຍຂ້າມແດນໄດ້ໄວຂຶ້ນ. ບັນດາເອກະສານທີ່ກ່ຽວຂ້ອງທາງການຄ້າປະກອບມີ: ໃບສັ່ງຊື້, ໃບຢັ້ງຢືນສຸຂາອະນາໄມພືດ ແລະ ສັດ, ໃບຂົນສົ່ງສິນຄ້າ ແລະ ອື່ນໆ ສາມາດຍື່ນ, ແລກປ່ຽນ ແລະ ດຳເນີນການໄດ້ທາງເອເລັກໂຕຣນິກ. ຍ້ອນເຫດຜົນດັ່ງກ່າວເຮັດໃຫ້ຫົວໜ່ວຍວິສາຫະກິດຂະໜາດນ້ອຍ ແລະ ກາງ (SME) ສາມາດເຂົ້າເຖິງຕະຫຼາດຕ່າງປະເທດໄດ້ງ່າຍ ແລະ ຈຳນວນຫຼາຍຂຶ້ນ (WEF, 2017). ນອກຈາກນັ້ນ, ການປະຫຍັດຕົ້ນທຶນ ແລະ ເວລາແມ່ນຍ້ອນຄວາມສະດວກໃນການສື່ສານ, ການກະກຽມເອກະສານທີ່ກ່ຽວຂ້ອງ ແລະ ແກ້ໄຂຂໍ້ຜິດພາດຕ່າງໆເພາະບໍ່ມີຄວາມຈຳເປັນຕ້ອງໄດ້ປ້ອນຂໍ້ມູນຄືນໃໝ່ເຮັດໃຫ້ຄວາມຜິດພາດຂອງຂໍ້ມູນແມ່ນຫຼຸດລົງ (MFTEC, 2001).

ຈາກການສຶກສາຂໍ້ມູນໃນເບື້ອງຕົ້ນ ພົບເຫັນວ່າບັນດາປະເທດອາຊຽນທີ່ນຳໃຊ້ລະບົບແຈ້ງພາສີປະຕູດຽວແມ່ນມີປະໂຫຍດຢ່າງຫຼວງຫຼາຍຕໍ່ກັບບັນດາຜູ້ປະກອບການເຊັ່ນ: ການສຶກສາຂອງ UNNExT (2010) ພົບວ່າການນຳໃຊ້ລະບົບການຄ້າແບບບໍ່ນຳໃຊ້ເຈ້ຍໃນທ່າເຮືອກຣັງ (Port Klang) ຂອງມາເລເຊຍ. ຍ້ອນການອຳນວຍຄວາມສະດວກຂອງລະບົບດັ່ງກ່າວເຮັດໃຫ້ໄລຍະເວລາທີ່ໃຊ້ທັງໝົດໃນການນຳເຂົ້າ ຫຼື ສົ່ງອອກໄດ້ຫຼຸດລົງຈາກ 4 ວັນ ມາເປັນ 2 ວັນ. ນອກນັ້ນຫຼາຍໆເອກະສານໄດ້ຮັບການປັບປຸງໃຫ້ ເປັນມາດຕະຖານໂດຍມີໂຄງຮ່າງແບບດຽວກັນ, ອັດຕາຄວາມຜິດພາດຂອງເອກະສານຫຼຸດລົງຈາກ 40 ສ່ວນຮ້ອຍ ເຫຼືອພຽງ 5 ສ່ວນຮ້ອຍ; ໄລຍະເວລາໃນການດຳເນີນເອກະສານຫຼຸດລົງຈາກເດີມທີ່ຕ້ອງໃຊ້ເວລາເຖິງ 12 ຊົ່ວໂມງ ໂດຍມີພະນັກງານຮັບຜິດຊອບສອງຄົນ ເຫຼືອພຽງ 15 ນາທີດ້ວຍພະນັກງານພຽງໜຶ່ງຄົນ. ພ້ອມກັນນັ້ນ, ຄວາມອາດສາມາດທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານຂອງກຸ່ມຜູ້ປະກອບການໃນທ່າເຮືອດັ່ງ ກ່າວກໍໄດ້ເພີ່ມຂຶ້ນຈາກ 40 ສ່ວນຮ້ອຍ ໃນປີ 1994 ເປັນ 99 ສ່ວນຮ້ອຍໃນປີ 2000.

ນອກຈາກນັ້ນ, UN/CEFACT (2005) ໄດ້ ປະເມີນກ່ຽວກັບລະບົບ LNSW ໃນຫຼາຍໆປະເທດ ຊຶ່ງລວມທັງສິງກະໂປ ພົບວ່າການນຳໃຊ້ລະບົບ TradeNet ຂອງສິງກະໂປໄດ້ຍົກປະສິດທິພາບຂອງຂັ້ນຕອນທາງພາສີຢ່າງຫຼວງຫຼາຍໃນເວລານັ້ນລະບົບດັ່ງກ່າວໄດ້ນຳໃຊ້ການຍື່ນເອກະສານແຈ້ງພາສີແບບບໍ່ໃຊ້ເຈ້ຍ (ແຕ່ຕ້ອງໄດ້ເກັບສະບັບສຳເນົາໄວ້ໃນສຳນັກງານຂອງຜູ້ປະກອບການ) ແລະ ຂະຫຍາຍໄລຍະເວລາການໃຫ້ບໍລິການ ຂຶ້ນຈາກເວລາລັດຖະການເປັນ 24 ຊົ່ວໂມງ. ຜົນການສຶກສາໄດ້ພົບວ່າໄລຍະເວລາຂອງການດຳເນີນເອກະສານໄດ້ຫຼຸດລົງຈາກ 4 ຊົ່ວໂມງເຫຼືອພຽງ 10 ນາທີ ແລະ ທີ່ສຳຄັນຄ່າທຳນຽມໄດ້ຫຼຸດລົງຈາກ 10 ໂດລາ ເຫຼືອພຽງແຕ່ 3.30 ໂດລາເທົ່ານັ້ນ. ນອກຈາກນັ້ນແລ້ວ, ຍັງມີຜົນກະທົບທີ່ເປັນດ້ານບວກຫຼາຍຢ່າງເຊັ່ນ:

ຜູ້ປະກອບການສາມາດເຂົ້າເຖິງຂໍ້ມູນຂ່າວສານໄດ້ຫຼາຍຂຶ້ນ ແລະ ພວກເຂົາກໍ່ສາມາດປະຕິບັດຕາມລະບຽບການໄດ້ໃນລະດັບທີ່ດີຂຶ້ນ.

ໃນກໍລະນີສຶກສາ ຂອງອິນໂດເນເຊຍ, Mahadika, Suharyono, and Mawardi (2017) ໄດ້ສຶກສາກ່ຽວກັບຜົນກະທົບຂອງລະບົບ ແຈ້ງພາສີປະຕູດຽວຂອງ ອິນໂດເນເຊຍຕໍ່ການການໄຫຼວຽນເຂົ້າ ແລະ ອອກຂອງສິນຄ້າຢູ່ທີ່ທ່າເຮືອ ທັນຈັງ ເປີຣັກ ສະລາບາຢ່າ (Tanjung Perak Surabaya) ພົບວ່າການນຳໃຊ້ລະບົບດັ່ງກ່າວເຮັດໃຫ້ຂັ້ນຕອນທາງພາສີຫຼຸດລົງ ແລະ ໄວຂຶ້ນ. ບົດສຶກສາດັ່ງກ່າວໄດ້ສຳພາດບັນດາຜູ້ປະກອບການເຊິ່ງໜຶ່ງໃນຜູ້ຮ່ວມສຳພາດໄດ້ແລກປ່ຽນວ່າ ຫຼັງຈາກນຳໃຊ້ລະບົບດັ່ງກ່າວ ໄລຍະການດຳເນີນເອກະສານແມ່ນຫຼຸດລົງຈາກ 3 ວັນເຫຼືອພຽງແຕ່ວັນດຽວ.

ພາຍຫຼັງທົບທວນຫຼາຍໆກໍລະນີສຶກສາໃນປະເທດອາຊຽນ ສາມາດເຫັນໄດ້ຢ່າງຊັດເຈນວ່າການນຳໃຊ້ລະບົບການຄ້າແບບບໍ່ນຳໃຊ້ເຈ້ຍ ແມ່ນມີຜົນປະໂຫຍດຢ່າງໃຫຍ່ຫຼວງແກ່ຜູ້ປະກອບການ. ເຖິງຢ່າງໃດກໍຕາມ, ຍັງມີບາງຂໍ້ສົງໃສໂດຍສະເພາະກ່ຽວກັບຄວາມພ້ອມທາງດ້ານເຕັກນິກ ແລະ ການເງິນຂອງຜູ້ປະກອບການຂະໜາດນ້ອຍໃນການເຂົ້າເຖິງ ແລະ ຍາດແຍ່ງເອົາຜົນປະໂຫຍດຈາກການນຳໃຊ້ລະບົບດັ່ງກ່າວ ບັນຫາທີ່ກ່ຽວຂ້ອງນີ້ອາດຈະກາຍເປັນຂໍ້ເສຍປຽບໃຫ້ບັນດາທຸລະກິດທີ່ກ່ຽວຂ້ອງ ເປັນຕົ້ນແມ່ນການຫັນທຸກຂັ້ນຕອນຍື່ນເອກະສານທາງເອເລັກໂຕຣນິກ ແລະ ໃນທີ່ສຸດ ລະບົບດັ່ງກ່າວອາດສົ່ງຜົນກະທົບຕໍ່ກັບຄວາມອາດສາມາດໃນການແຂ່ງຂັນຂອງຫົວໜ່ວຍທຸລະກິດໃນຕະຫຼາດປາຍທາງ (UN/CEFACT, 2018).

<u>ຈຸດປະສົງໃນການສຶກສາ</u>

ສປປ ລາວ ຍັງຢູ່ໃນໄລຍະເລີ່ມຕົ້ນຂອງການຫັນເປັນດິຈິຕອນ ຍັງຕ້ອງການນະໂຍບາຍ ແລະ ນິຕິກຳເພື່ອສະໜັບສະໜູນ. ເນື່ອງຈາກ ສປປ ລາວ ບໍ່ອາດສາມາດປະຕິເສດຂະບວນການຫັນເປັນດິຈິຕອນ ແລະ ທັນສະໄໝໄດ້, ທັງພາກລັດ ແລະ ເອກະຊົນ ຈາເປັນຕ້ອງໄດ້ຮັບຮູ້ເຖິງຜົນປະໂຫຍດຂອງການຫັນເປັນທັນສະໄໝດັ່ງກ່າວ ພ້ອມທັງຕ້ອງການຄຳແນະນຳ ແລະ ນິຕິກຳສະເພາະ ເພື່ອເປັນຍຸດທະສາດຮ່ວມກັນ ແລະ ລວມເອົາທຸກພາກສ່ວນ ເພື່ອພັດທະນາວຽກງານຫັນເປັນທັນໄໝ, ການຄ້າທາງເອເລັກໂຕຣນິກ ແລະ ການແຈ້ງພາສີປະຕູດຽວທາງເອເລັກໂຕຣນິກ ຢ່າງທັນການ ແລະ ມີປະສິດທິພາບ. ທີ່ສຳຄັນໃນໄລຍະຜ່ານມາ ການສຶກສາທີ່ພິຈາລະນາເຖິງຜົນກະທົບຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດຂອງ ສປປ ລາວ ຍັງມີຈຳກັດ, ດ້ວຍເຫດນັ້ນບົດສຶກສານີ້ ຈຶ່ງມີຈຸດປະສົງເພື່ອ:

- ເພື່ອເຂົ້າໃຈເຖິງບັນຫາຂອງປະສິດທິພາບການໃຫ້ບໍລິການໃນໄລຍະການດຳເນີນການຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດ ແລະ ກົນໄກອື່ນໆ ທີ່ຕິດພັນກັບລະບົບ;
- ເພື່ອສະເໜີແນະທາງດ້ານນະໂຍບາຍເພື່ອຍົກລະດັບປະສິດທິພາບຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດ.

<u>ການອອກແບບບົດສຶກສາ</u>

ການສຶກສານີ້ໄດ້ນຳໃຊ້ວິທີການຄົ້ນຄ້ວາແບບຄຸນນະພາບ (Qualitative study design). ໂດຍອີງໃສ່ຂໍ້ມູນຈາກການສຳພາດ ໂດຍນຳໃຊ້ຄຳຖາມແບບເປີດ (In-depth interview) ເຊິ່ງເປັນຂໍ້ມູນຈາກຜູ້ນຳໃນລະບົບແຈ້ງພາສີປະຕູດຽວການປຽບທຽບຂອງການນຳໃຊ້ຂໍ້ມູນແບບຄຸນນະພາບ ຫຼື ກໍລະນີການສຶກສາບົດສຳຫຼວດ. ຈຳນວນຜູ້ເຂົ້າຮ່ວມໃນການສຶກສາຄັ້ງນີ້ແມ່ນມີຈຳນວນໜ້ອຍ ແຕ່ເປັນກຸ່ມຕົວຢ່າງທີ່ໄດ້ຂໍ້ມູນແບບເຈາະຈົງເມື່ອທຽບກັບການນຳໃຊ້ຂໍ້ມູນສະຖິຕິ. ໄລຍະການລົງເກັບຂໍ້ມູນເລີ່ມແຕ່ເດືອນ ມິຖຸນາ ເຖິງ ສິງຫາ ປີ 2021, ໂດຍທີມງານຄົ້ນຄ້ວາໄດ້ນຳໃຊ້ການລົງເກັບຂໍ້ມູນຢູ່ພື້ນທີ່ຕົວຈິງ (Face-to-Face) ແລະ ຮູບແບບການປະຊຸມທາງໄກ.

<u>ການເລືອກກຸ່ມຕົວຢ່າງ ແລະ ຂັ້ນຕອນການເກັບຂໍ້ມູນ</u>

ແບບແຜນວິທີການເລືອກກຸ່ມຕົວຢ່າງ ຂອງການສຶກສາແບບຄຸນນະພາບ (Qualitative) ແມ່ນແຕກຕ່າງກັບວິທີການສຶກສາແບບປະລິມານ (Quantitative) ການສຶກສາແບບຄຸນນະພາບແມ່ນບໍ່ມີຈຳນວນກຸ່ມທີ່ແນ່ນອນ ໂດຍຕົວເລກຂອງກຸ່ມຕົວຢ່າງແມ່ນຂຶ້ນກັບຂໍ້ມູນທີ່ໄດ້ຈາກການສຳພາດ. ໝາຍຄວາມວ່າການເກັບຂໍ້ມູນຖືວ່າສຳເລັດຖ້າຫາກໄດ້ຮັບຂໍ້ມູນທີ່ຄ້າຍຄືກັນໃນການສຳພາດ. ໃນການສຳພາດຄັ້ງນີ້ໄດ້ສັງ ລວມຂໍ້ມູນ 18 ພາກສ່ວນຈາກບັນດາບໍລິສັດ ນຳເຂົ້າຍານພາຫະນະ, ບໍລິສັດນຳເຂົ້າສົ່ງອອກ, ບໍລິສັດຈັດຈຳໜ່າຍ, ບໍລິສັດຂົນສົ່ງ, ແລະ ອື່ນໆ.

<u>ຂອບເຂດການສຶກສາ</u>

ການສຶກສານີ້ໄດ້ນຳໃຊ້ນະຄອນຫລວງວຽງຈັນ, ສປປ ລາວ ເປັນກໍລະນີໃນການສຶກສາເຊິ່ງໄດ້ລວບລວມຜູ້ເຂົ້າຮ່ວມທີ່ເປັນຄົນລາວ ຫຼື ຕ່າງປະເທດ ກ່ຽວຂ້ອງກັບລະບົບແຈ້ງພາສີປະຕູດຽວແຫ່ງຊາດ. ບົດສຶກສາສະບັບນີ້ໄດ້ລົງເລິກກ່ຽວກັບລະບົບແຈ້ງພາສີປະຕູດຽວແຫ່ງ

ຊາດພາຍໃຕ້ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງກະຊວງອຸດສາຫະກໍາ ແລະ ການຄ້າ.

### ຜົນຂອງການສຶກສາ

ຈາກ **ຮູບທີ 1** ໄດ້ໃຫ້ຮູ້ວ່າຂະບວນການແຈ້ງພາສີໃນລະບົບ LNSW ປະກອບດ້ວຍ 4 ຂັ້ນຕອນພື້ນຖານໄດ້ແກ່: 1. ການປ້ອນຂໍ້ມູນເຂົ້າໃນລະບົບມ 2. ການກວດກາເອກະສານກ່ຽວກັບພາສີ ແລະ ຂັ້ນຕອນການອະນຸມັດ (ໄລຍະເວລາຂຶ້ນກັບປະເພດສິນຄ້າ); 3. ການຊໍາລະຄ່າທໍານຽມ ຜ່ານ Smart tax. 4. ການປ່ອຍສິນຄ້າ ເຊິ່ງເຫັນວ່າເປັນລະບົບທີ່ກະທັດຮັດ ແລະ ສະດວກສະບາຍ.

ຈາກການນໍາໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດມີ 8 ບໍລິສັດເຫັນວ່າມີປະໂຫຍດ, ອີກ 7 ບໍລິສັດເຫັນວ່າດີຫຼາຍ ໂດຍສະເພາະແມ່ນການແຈ້ງພາສີຜ່ານລະບົບປະຕູດຽວແຫ່ງຊາດຊ່ວຍຫຼຸດຂັ້ນຕອນ ຂັ້ນຂອດການຍື່ນເອກະສານ, ຂະບວນການປະມວນເອກະສານ, ການປະມວນເອກະສານໃນເຄົາເຕີ້ ແລະ ຫຼຸດຜ່ອນການເດີນທາງໄປຫາພາກສ່ວນກ່ຽວຂ້ອງ, ລະບົບສະດວກສະບາຍ, ແລະ ບໍ່ຈໍາເປັນຕ້ອງໄປຕື່ມຂໍ້ມູນຫຼາຍເທື່ອ.ນອກຈາກນັ້ນຜູ້ຕອບຄໍາຖາມຍັງ ໄດ້ໃຫ້ຮູ້ວ່າລະບົບເອເລັກໂຕຣນິກຍັງໄດ້ຫຼຸດຜ່ອນຄວາມສ່ຽງກ່ຽວກັບເອກະສານສູນຫາຍ, ມີຄວາມປອດໃສໃນການພົວພັນລະຫວ່າງພາກລັດ ແລະ ທຸລະກິດຫຼາຍກ່ວາເກົ່າ, ແລະ ຮັບປະກັນການເກັບພັນທະເຂົ້າພາກລັດໃຫ້ມີປະສິດຕິພາບຫລາຍຂຶ້ນ.

ເຖິງແມ່ນວ່າລະບົບນີ້ແມ່ນຢູ່ໃນຂັ້ນຕອນເລີ່ມຕົ້ນພາກທຸລະກິດຫຼາຍພາກສ່ວນໄດ້ສະແດງໃຫ້ເຫັນເຖິງຄວາມເຊື່ອໝັ້ນວ່າລະບົບນີ້ຈະຖືກພັດທະນາໃຫ້ດີຂຶ້ນໃນໄລຍະຍາວ. ໃນທາງກົງກັນຂ້າມມີພຽງ 3 ບໍລິສັດ ທີ່ມີປະສົບການນາໃຊ້ທີ່ຫຍຸ້ງຍາກ. ເຖິງແມ່ນວ່າລະບົບແຈ້ງພາສີປະຕູດຽວແຫ່ງຊາດ ແມ່ນໄດ້ຖືກນໍາໃຊ້ເປັນຢ່າງເປັນທາງການແລ້ວ ຜູ້ນໍາໃຊ້ຕົວຈິງໄດ້ໃຫ້ຂໍ້ສັງເກດວ່າມີບາງຂັ້ນຕອນຍັງບໍ່ສາມາດປະຕິບັດແບບເອເລັກໂຕຣນິກ ໄດ້ທັງຫມົດຈຶ່ງຈໍາເປັນຕ້ອງປະຕິບັດແບບເກົ່າຢູ່ ແລະ ບາງຂັ້ນຕອນທາງເຕັກນິກແມ່ນແທດເໝາະກັບການໃຊ້ລະບົບແບບເກົ່າຫຼາຍກ່ວາ. ໃນໄລຍະຜ່ານມາການຈັດຕັ້ງປະຕິບັດລະບົບແຈ້ງພາສີປະຕູດຽວແຫ່ງຊາດຍັງບໍ່ທັນໄດ້ຜົນຮັບຢ່າງເຕັມສ່ວນເທື່ອ, ເນື່ອງຈາກບັນດາຂໍ້ຈໍາກັດທີ່ເກີດຈາກ ລະບົບ ແລະ ຄວາມເຂົ້າໃຈຂອງພາກທຸລະກິດຕໍ່ການໃຊ້ລະບົບດັ່ງນັ້ນຈຶ່ງບໍ່ສາມາດລົບລ້າງລະບົບທີ່ໃຊ້ເຈ້ຍແບບ 100% ໄດ້. ການແຈ້ງພາສີແມ່ນສາມາດຈັດຕັ້ງປະຕິບັດຜ່ານລະບົບ ASYCUDA, ໃນຂັ້ນຕອນນີ້ ຜູ້ແຈ້ງພາສີຈໍາເປັນຕ້ອງສະແກນ, ອັບໂຫຼດຟາຍເອກະສານ, ແລະ ພິມໃບແຈ້ງພາສີໃນຂັ້ນຕອນສຸດທ້າຍ. ສິ່ງທ້າທາຍຕົ້ນຕໍໃນປັດຈຸບັນແມ່ນກ່ຽວກັບການເຊື່ອມໂຍງລະຫວ່າງ ລະບົບແຈ້ງພາສີປະຕູດຽວແຫ່ງຊາດກັບລະບົບ e-CO.

**ຮູບທີ 1: ຂະບວນການ ສາລັບການແຈ້ງພາສີ**




ຂໍ້ມູນຈາກ: USAID, 2018

ພາກທຸລະກິດ ຍັງຂາດຄວາມເຂົ້າໃຈກ່ຽວກັບລະບົບ ແລະ ກົນໄກຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດ ໃນການເຊື່ອມຕໍ່ກັບພາກສ່ວນທີ່ກ່ຽວຂ້ອງ. ນອກຈາກນີ້ຍັງມີບັນຫາປົກຍ່ອຍທາງເຕັກນິກໃນການເຊື່ອມຕໍ່ກັບລະບົບທະນາຄານ ເພື່ອຊໍາລະເງິນທາງເອເລັກໂຕຣນິກ, ບັນຫາອື່ນໆເຊັ່ນວ່າການຂາດນິຕິກໍາຕິດພັດກັບການຄ້າເອເລັກໂຕຣນິກທີ່ເຊື່ອມໂຍງກັບບັນດາປະ ເທດສະມາຊິກອາຊຽນ ແລະ ການແລກປ່ຽນຂໍ້ມູນເອເລັກໂທຣນິກອື່ນໆຍັງຊັກຊ້າ. ກົດລະບຽບທີ່ກ່ຽວຂອງກັບການແລກ ປ່ຽນຂໍ້ມູນຂ່າວສານກັບຕ່າງປະເທດລວມທັງປະເທດສະ ມາຊິກອາ ຊຽນຍັງບໍ່ທັນໄດ້ຮັບການພັດທະນາ ແລະ ຝຶກອົບຮົມຍ່າງພຽງພໍ ໂດຍການຝຶກອົບຮົມທີ່ຈັດຕັ້ງປະຕິບັດຜ່ານມາຍັງເປັນລັກສະນະທິດສະດີຫລາຍກວ່າພາກປະຕິພັດຕົວຈິງໃຫ້ແກ່ພາກສ່ວນທຸລະກິດ.

> "...ໃນຄວາມຄິດຂອງຂ້ອຍ, ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ແມ່ນລະບົບອັດຕະໂນມັດທີ່ຫຼຸດຜ່ອນດ້ານເວລາ, ຂະບວນການປະມວນເອກະສານ ແລະ ຄວາມເຂົ້າໃຈງ່າຍ. ລັດຖະບານໄດ້ມີການຈັດການຝຶກອົບຮົມທີ່ສ້າງປະສົບການໃນການປະຕິບັດຕົວຈິງໃຫ້ຜູ້ໃຊ້ເປັນພື້ນຖານ..."
>
> ຕົວແທນຈາກບໍລິສັດຜູ້ນໍາເຂົ້າ ຍານພາຫະນະ
>
> ເພດຊາຍ, ອາຍຸ 35 ປີ
>
> "....ເປັນລະບົບອັດຕະໂນມັດທີ່ສົມບູນແບບ, ສ້າງຄວາມສະດວກສະບາຍຫຼາຍໃຫ້ແກ່ບໍລິສັດຂອງພວກເຮົາ ໂດຍທີ່ບໍ່ຕ້ອງເດີນທາງໄປສົ່ງເອກະສານຕາມສະຖານທີ່ຕ່າງໆ..."
>
> ຕົວແທນຈາກບໍລິສັດຜູ້ນໍາເຂົ້າ / ບໍລິສັດຈັດຈໍາໜ່າຍ
>
> ເພດຊາຍ, ອາຍຸ 27 ປີ
>
> "....ການນໍາໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ເຮັດໃຫ້ເກີດປະໂຫຍດໂດຍກົງຕໍ່ຜູ້ຊົມໃຊ້, ແຕ່ເຖິງຢ່າງໃດກໍ່ຕາມພວກເຮົາຄິດວ່າ ມັນບໍ່ງ່າຍໃນການນໍາໃຊ້ລະບົບ ໃຫ້ມີປະສິດທິພາບ. ພວກເຮົາບໍ່ສາມາດເຂົ້າໃຈໃນການນໍາໃຊ້ລະບົບທັງໝົດ ແລະ ຂະບວນການບາງຢ່າງທີ່ຈໍາເປັນຕ້ອງກວດສອບດ້ວຍຕົວເອງ. ເຖິງວ່າຈະເຂົ້າຮ່ວມບັນດາໂຄງການຝຶກອົບຮົມຂອງລັດຖະບານກໍ່ຕາມ, ແຕ່ຫຼາຍຂະບວນການຕ້ອງໄດ້ຮັບຄວາມກະຈ່າງແຈ້ງຕື່ມອີກ..."
>
> ຕົວແທນຈາກບໍລິສັດຂົນສົ່ງ
>
> ເພດຍິງ, ອາຍຸ 29 ປີ
>
> "... ໃນໄລຍະຜ່ານມາພວກເຮົາກໍ່ມີໂອກາດເຂົ້າຮ່ວມຝຶກອົບຮົມຫຼາຍເທື່ອແຕ່ສ່ວນຫຼາຍຍັງມີລັກສະນະເປັນຮູບແບບທິດສະດີຍັງຂາດພາກປະຕິບັດ ທີສາມາດຕໍ່ຍອດໄດ້ ..."
>
> ຕົວແທນຈາກບໍລິສັດຜູ້ນໍາເຂົ້າ / ບໍລິສັດຈັດຈໍາໜ່າຍ
>
> ເພດຊາຍ, ອາຍຸ 37 ປີ

ການສຶກສາຍັງຊີ້ໃຫ້ເຫັນວ່າ ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ເຮັດໃຫ້ການຊໍາລະເງິນມີຄວາມສະດວກຂຶ້ນ, ແຕ່ວ່າຄ່າທໍານຽມໃນການໃຊ້ບໍລິການແມ່ນບໍ່ໄດ້ຫຼຸດລົງພໍທໍ່ໃດ. ບາງບໍລິສັດໃຫ້ຮູ້ວ່າ ຄ່າທໍານຽມໃນການດໍາເນີນການ ພາຍໃຕ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດນັ້ນ ແມ່ນເພີ່ມຂຶ້ນເລັກໜ້ອຍທຽບໃສ່ການນໍາໃຊ້ແບບເກົ່າ ຊຶ່ງຄ່າທໍານຽມຂອງການບໍລິການຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດ ປະກອບມີຄ່າທໍານຽມໃນການດາເນີນການ ແລະ ຄ່າໂອນເງິນຈ່າຍຄ່າທໍານຽມຕ່າງໆ.

> "....ເຖິງແມ່ນວ່າການນໍາໃຊ້ ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ຈະສະໜອງວິທີການທີ່ສະດວກກວ່າໃນເງື່ອນໄຂຂອງການນໍາເຂົ້າ ແລະ ສົ່ງອອກ. ຢ່າງໃດກໍຕາມ, ພວກເຮົາບໍ່ຄິດວ່າ ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ຄ່າບໍລິການໜ້ອຍກວ່າເມື່ອປຽບທຽບກັບລະບົບທີ່ນາໃຊ້ຜ່ານມາ. ພາຍໃຕ້ ລະບົບນີ້ຍັງມີການດໍາເນີນການ ແລະ ຄ່າທໍານຽມທະນາຄານ..."
>
> ຕາງໜ້າຈາກບໍລິສັດສົ່ງອອກ
>
> ເພດຊາຍ, ອາຍຸ 40 ປີ
>
> "...ກ່ອນລະບົບແຈ້ງແຫ່ງຊາດ, ພວກເຮົາຈ່າຍ 130,000 ກີບ ສໍາລັບຂະບວນການໃນການໃຊ້ບໍລິການການນໍາເຂົ້າ, ຫຼັງທີ່ໄດ້ມີການຈັດຕັ້ງປະຕິບັດຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດ, ຂະບວນຄ່າທໍານຽມເພີ່ມຂຶ້ນ 150,000 ກີບ..."
>
> ຕົວແທນຈາກບໍລິສັດຂົນສົ່ງ/ ແລ່ນເອກະສານ
>
> ເພດຊາຍ, ອາຍຸ 30 ປີ

ຈາກຜົນການສໍາພາດເຫັນວ່າລະບົບແຈ້ງພາສີປະຕູດຽວແຫ່ງຊາດ ເປັນລະບົບທີ່ດີ ແລະ ສະດວກສະບາຍ, ຫຼຸດຜ່ອນເວລາໃນການຮັບ ແລະ ສົ່ງເອກະສານ. ເຖິງຢ່າງໃດກໍຕາມ, ຍັງມີບາງບ່ອນທີ່ຕ້ອງປັບປຸງ ເປັນຕົ້ນແມ່ນສິ່ງອໍານວຍຄວາມສະດວກສໍາລັບຜູ້ມາໃຊ້ບໍລິການ ໄດ້ແກ່: ຄອມພິວເຕີ, ເຄື່ອງພິມເອກະສານ, ແຜ່ນລາຍເຊັ່ນເອເລັກໂຕຣນິກ, ເຄື່ອງອັດເອກະສານ ແລະ ອື່ນໆ ຢູ່ຈຸດແຈ້ງສິນຄ້າຍັງບໍ່ພຽງພໍ ເຮັດໃຫ້ບໍລິການຊັກຊ້າ.

ຜູ້ນໍາໃຊ້ຫຼາຍຄົນເວົ້າວ່າລະບົບນັ້ນຖືກພັດທະນາມາດີ ແຕ່ຜູ້ນໍາໃຊ້ຈໍານວນໜຶ່ງໃຊ້ງານບໍ່ໄດ້ດີເນື່ອງຈາກຂາດຄວາມຮູ້ໃນການນໍາໃຊ້ພື້ນຖານ ຂາດຄວາມຊໍານານ ແລະ ປະສົບການໃນການນໍາໃຊ້ລະບົບບໍລິການປະຕູດຽວ. ການປ້ອນຂໍ້ມູນບາງຢ່າງຍັງຊໍ້າຊ້ອນ ແລະ ຍັງຕ້ອງນໍາໃຊ້ຄູ່ມືໃນການດໍາເນີນການຂັ້ນສຸດທ້າຍ, ຍິ່ງໄປກວ່ານີ້ໃນບາງກໍລະນີພະນັກງານຂອງບໍລິສັດຕ້ອງຍື່ນເອກກະສານຫຼັງຈາກສິນຄ້າຮອດແລ້ວດ້ວຍຕົນເອງສິ່ງຜົນໃຫ້ເວລາການດໍາເນີນງານສູງກວ່າລະບົບແບບປົກກະຕິ.

## ສະຫຼຸບຜົນການສຶກສາ

ແນວຄິດທີ່ຈະນຳໃຊ້ ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ແມ່ນໄດ້ມີການກະກຽມມາຕັ້ງແຕ່ປີ 2013 ເຊິ່ງໄດ້ມີການ ຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ. ຫຼັງຈາກນັ້ນໃນປີ 2015, ກະຊວງການເງິນ ກໍໄດ້ອອກຂໍ້ຕົກລົງວ່າດ້ວຍການ ຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວສຳລັບພັດທະນາ, ຈັດຕັ້ງປະຕິບັດ ແລະ ດຳເນີນງານ ລະບົບແຈ້ງພາສີປະຕູດຽວ. ການພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດແມ່ນສອດຄ່ອງກັບລະບົບປະຕູດຽວຂອງບັນດາປະເທດສະມາຊິກອາຊຽນທີ່ເຮັດໃຫ້ທຸກປະເທດໃນອາຊຽນ ສາມາດແບ່ງປັນຂໍ້ມູນນຳກັນໄດ້. ເຖິງແມ່ນວ່າລະບົບລະບົບແຈ້ງພາສີປະຕູດຽວແຫ່ງຊາດເປັນລະບົບໃໝ່ທີ່ໄດ້ຫັນເປັນທັນສະໃໝ ແລະ ມີຫຼາຍຫົວ ໜ່ວຍທຸລະກິດທີ່ໄດ້ຫັນມານຳໃຊ້ລະບົບນີ້ໃນການນຳເຂົ້າ ແລະ ສົ່ງອອກສິນຄ້າຫຼາຍຂຶ້ນໃນປັດຈຸບັນແຕ່ການນຳໃຊ້ລະບົບດັ່ງກ່າວໃນໄລຍະຜ່ານມາແມ່ນເຫັນວ່າຍັງບໍ່ທັນສູງເທົ່າທີ່ຄວນໃນກຸ່ມທຸລະກິດນຳເຂົ້າ-ສົ່ງອອກຂອງປະເທດ. ອີງໃສ່ວິທີວິທະຍາແບບຄຸນນະພາບ (Qualitative) ໂດຍການສຳພາດ ບໍລິສັດນຳເຂົ້າ-ສົ່ງ ອອກ ສັງລວມໄດ້ວ່າການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ສາມາດບັນລຸເປົ້າໝາຍ ແລະ ຄວາມຄາດຫວັງເບື້ອງຕົ້ນ ເຊິ່ງຍອມຮັບວ່າລະບົບສາມາດອຳນວຍຄວາມສະດວກໃນ ການແຈ້ງສິນຄ້າ, ຍົກລະດັບຄວາມໝັ້ນໃຈໃນການນຳສົ່ງເອກະສານ ແລະ ຕິດຕາມກວດກາ, ສ້າງເງື່ອນໄຂທີ່ສະດວກໃນການບໍລິການ, ແລະ ຮັບປະກັນການເກັບພັນທະເຂົ້າພາກລັດຢ່າງມີລະບົບ. ຢ່າງໃດກໍຕາມພາກທຸລະກິດຍັງຂາດຄວາມເຂົ້າໃຈກ່ຽວກັບລະບົບ ແລະ ກົນໄກຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດໃນການເຊື່ອມຕໍ່ກັບພາກສ່ວນທີ່ກ່ຽວຂ້ອງ ນອກຈາກນີ້ຍັງມີບັນຫາປົກຍ່ອຍທາງເຕັກນິກທີ່ກເກີດຂຶ້ນໃນການຈັດຕັ້ງປະຕິບັດທີ່ເຮັດໃຫ້ໄລຍະເວລາມີການຊັກຊ້າ. ການສະເໜີແນະທາງວິຊາການປະກອບສ່ວນເພື່ອຍົກລະດັບປະສິດທິພາບຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດແມ່ນໄດ້ອະທິບາຍໃນພາກ ສຸດທ້າຍລຸ່ມນີ້.

### ຂໍ້ແນະນຳໃນດ້ານນະໂຍບາຍ

**ໄລຍະສັ້ນ**

- ຈັດຕັ້ງປະຕິບັດໂຄງການຝຶກອົບຮົມສ້າງຄວາມເຂັ້ມແຂງຄວນທີ່ໄດ້ສ້າງລະຫວ່າງພາກລັດ ແລະ ຜູ້ປະກອບການໃຫ້ສາມາດນຳໃຊ້ລະບົບດີຂຶ້ນ. ນອກຈາກນັ້ນຍັງຈຳເປັນຈະຕ້ອງມີການພັດທະນາຫຼັກສູດສຳລັບແຕ່ລະພາກສ່ວນທີ່ນຳໃຊ້ ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ເຊັ່ນ: ວິຊາການດ້ານຄອມພິວເຕີ, ຜູ້ບໍລິຫານລະບົບ, ພະນັກງານສະໜອງຂໍ້ມູນ, ແລະ ພາກສ່ວນທຸລະກິດ;
- ແລກປ່ຽນບົດຮຽນກັບບັນດາປະເທດທີ່ ມີຄວາມກ້າວໜ້າ ແລະ ປະສົບຜົນສຳເລັດໃນການຈັດຕັ້ງປະຕິບັດ ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ໃນພາກພື້ນ ໄດ້ແກ່ ປະເທດໄທ, ຫວຽດນາມ, ສິງກະໂປ ແລະ ຍີ່ປຸ່ນ.

**ໄລຍະຍາວ**

- ສ້າງຄວາມເຂົ້າໃຈ ແລະ ສ້າງແຮງຈູງໃຈໃນການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ, ການບໍລິການຄ່າທຳນຽມຄວນຮັກສາໃນລະດັບລາຄາເໝາະສົມພ້ອມທັງໃຫ້ສາມາດຊຳລະໃນຄັ້ງດຽວໃຫ້ເປັນທຸລະກຳດຽວ;
- ຮັບປະກັນໃຫ້ລະບົບຕ້ອງມີສະຖຽນຂຶ້ນ ແລະ ການເຂົ້າເຖິງຂໍ້ມູນທີ່ງ່າຍດາຍຈາກຜູ້ຊົມໃຊ້,ຮັບປະກັນການສະໜອງອຸປະກອນທີ່ຈຳເປັນໃຫ້ຢູ່ຈຸດບໍລິການໃຫ້ພຽງພໍເຊັ່ນ: ຄອມພິວເຕີ, ເຄື່ອງພິມເອກະສານ, ອິນເຕີເນັດ, ເຄື່ອງສຳເນົາເອກະສານ ແລະ ອື່ນໆ;
- ໃນກໍລະນີຍັງມີບັນຫາດ້ານເຕັກນິກ ຫຼື ລະບົບແຈ້ງບັນຊີແຫ່ງຊາດຂັດຂ້ອງ, ຄວນຈະມີພະນະງານຊ່ວຍເຫຼືອ ແລະ ມີມາດຕະການຊົດເຊີຍຄ່າເສຍໂອກາດທີ່ເໝາະສົມ;
- ການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບລະບົບປະຕູດຽວແຫ່ງຊາດຄວນໃຫ້ມີຄວາມຫຼາກຫຼາຍຂຶ້ນຕື່ມເຊັ່ນ:
  - ສ້າງສິ່ງພິມ, ປ້າຍໂຄສະນາ ແລະ ວີດີໂອຢູ່ໃນເວັບໄຊທ໌ທີ່ກ່ຽວຂ້ອງຂອງລະບົບແຈ້ງພາສີປະຕູດຽວແຫ່ງຊາດ;
  - ໂຄສະນາແນະນຳວິທີນຳໃຊ້ຜ່ານສື່ອອນໄລ ເຊັ່ນ: Facebook, Instagram, LinkedIn ແລະ ອື່ນໆ;
  - ມີການສົ່ງໂຄສະນາ ແລະ ແນະນຳວິທີໃຊ້ຜ່ານທາງ ຂໍ້ຄວາມທາງມືຖື ເພື່ອເຮັດໃຫ້ການນຳໃຊ້ LNSW ມີການຮັບຮູ້ໃນວົງກ້ວາງຂຶ້ນຕື່ມ.

## ເອກະສານອ້າງອີງ


Mahadika, D., Suharyono, S., & Mawardi, M. K. (2017). Peran Indonesia National. single Window.(insw).terhadap Penanganan. barang. impor (Studi. kasus. pada. pt. Otsuka Indonesia. malang). Jurnal Administrasi Bisnis, 42(1), 46-55.

LNSW. (2021). *Definition & Objectives*. Lao Naitonal Single Window. https://www.laonsw.net/web/epermitsv2/definition-objectives

MOF. (2015). *Agreement on the Implementation and Activities of the Development and Operation of the Lao National Single Window system (LNSW)*. Vientiane Laos: Ministry of Finance

MFTEC. (2001). Paperless Trading, Benefit to APEC. Commonweath of Australia.

UN/CEFACT. (2005). Case studies on implementing a Single Window to enhance the efficient exchange of information between trade and government.

UN/CEFACT. (2018). White Paper on Paperless Trade. White Paper.

WEF. (2017). Trading, Paperless, How Does It Impact the Trade System. Paper presented at the World EconomicForum.


